## ກະຊວງສຶກສາທິການ ແລະ ກໍ່ສ້າງ
## ມະຫາວິທະຍາໄລທຸລະກິດ ແລະ ເຕັກໂນໂລຊີຮ່າໂນ້ຍ

# ແຈ້ງການຮັບສະໝັກນັກສຶກສາສົກຮຽນ
# 2022 - 2023





ຕິດຕໍ່ສອບຖາມ
ມະຫາວິທະຍາໄລທຸລະກິດ ແລະ ເຕັກໂນໂລຊີຮ່າໂນ້ຍ
ສະຖານທີ່: ເລກ 29 A, ຮ່ອມ 124, ຖະໜົນວ່ຽງຕຸຍ, ເມືອງຮາຍບ່າຈຶງ,
ນະຄອນຫຼວງຮ່າໂນ້ຍ
ໂທລະສັບ: ອາຈານ ກວາງ +84969352212 ຫຼື +84913514007
thayquang_laos@yahoo.com
ອາຈານຕວ່ນ: + 84 36 981 8836 ຫຼື + 84962636320
Mail: tuanlx.hubt@gmail.com
https://www.facebook.com/tuan.lexuan.54

ກະຊວງສຶກສາທິການ ແລະ ກິລາ
ມະຫາວິທະຍາໄລ
ທຸລະກິດ ແລະ ເຕັກໂນໂລຊີ ຮ່າໂນ້ຍ
ເລກທີ: / / TBTS - HTQT

ສາທາລະນະລັດສັງຄົມນິຍົມຫວຽດນາມ
ເອກະລາດ ເສລີພາບ ຄວາມຜາສຸກ
-----------------------------------
ຮ່າໂນ້ຍ, ວັນທີ ເດືອນ ປີ 2022

# ແຈ້ງການ
# ຮັບສະໝັກນັກສຶກສາລາວສົກຮຽນ 2022 - 2023

ມະຫາວິທະຍາໄລທຸລະກິດ ແລະ ເຕັກໂນໂລຊີຮ່າໂນ້ຍໄດ້ສ້າງຂຶ້ນໃນເດືອນ 6 ປີ 1996 ໂດຍທ່ານສາດສະດາຈານເຈິ່ນເຝືອງ, ປະທານສະມາຄົມວິທະຍາສາດເສດຖະກິດຫວຽດນາມ, ອາດີດເປັນຄະນະປະຈຳ ມະ ການສູນກາງພັກກອມມູນິດຫວຽດນາມ(ສະໄໝ ແລະ ທີ ) ແລະ ອາດີດເປັນຮອງນາຍົກລັດຖະມົນຕີເປັນຜູ້ອຳນວຍການ ໂຮງຮຽນ.

ພາລະໜ້າທີ່ຂອງໂຮງຮຽນແມ່ນກໍ່ສ້າງບັນດານັກເສດຖະກິດ ແລະນັກເຕັກນິກເຕັກໂນໂລຊີພາກປະຕິບັດ,ທ່ານໝໍ, ໝໍປາເກັ່ງດ້ານວິຊາສະເພາະເພື່ອສ້າງຊັບພະຍາກອນມະນຸດໃຫ້ມີລະດັບສູງແກ່ການຫັນເປັນພາລະກິດອຸດສາຫະກຳ ແລະ ທັນສະໄໝຂອງປະເທດຊາດ.

ຊາວກວ່າປີຜ່ານມາໂຮງຮຽນໄດ້ຮັບນັກສຶກສາຈຳນວນທັງໝົດ144.600 ຄົນ, ໃນນັ້ນມີຈຳນວນນັກສຶກສາລາວ ແລະ ກຳປູເຈຍ ແມ່ນ 1000 ຄົນ. ນັກສຶກສາທີ່ຮຽນຈົບມີທັງໝົດ109.636ຊັ້ນປະລິນຍາຕີ,ນັກວິສະວະກອນກໍ່ສ້າງ, ນັກສາຖາປັດຕະຍະກຳ ແລະ 3.517 ຊັ້ນປະລິນຍາໂທ, ສ່ວນຫຼາຍນັກສຶກສາທີ່ຮຽນຈົບຈະມີວຽກເຮັດງານທຳ ແລະ ໄດ້ຮັບເງິນເດືອນສູງ.

ໂຮງຮຽນມີກຸ່ມແຖວຄູອາຈານຢ່າງເໝາະສົມ ແລະ ມີປະສົບການ: ລວມມີ 1.139 ຄົນເປັນ ຄູອາຈານປະຈຳ, ໃນນັ້ນມີ 208 ຄູອາຈານທີ່ມີລະດັບສາດສະດາຈານ, ປະລິນຍາເອກ, ແລະ ຄູອາຈານມີລະດັບປະລິນຍາໂທມີ 666 ຄົນ.

* ດ້ານພື້ນຖານວັດຖຸ : ໂຮງຮຽນມີສະຖານທີ່ປຸສອງແຫ່ງເຊັ່ນ:

ສາຂາທີ1: ຢູ່ວິງຕຸຍ(ຮ່າໂນ້ຍ)ສາມາດຮັບໄດ້ 30.000ນັກຮຽນ.

* ສາຂາສອງຢູ່: ກີ່ເຊີນ ບັກນິງສາມາດຮັບໄດ້10.000ນັກຮຽນ ແລະ ມີຫໍພັກນັກສຶກສາສາມາດຮັບໄດ້ 2000 ຄົນ ແລະ ມີກິລາໃນຮົ່ມ ແລະ ເດີ່ນຫຼິ້ນກິລາ.

* ໂຮງຮຽນມີຄອມພິວເຕີ4000ໜ່ວຍເຊື່ອມຕໍ່ອິນເຕີເນັດເພື່ອສະດວກໃນການຮຽນຂອງນັກສຶກສາ,ພາຍໃນຂອງໂຮງຮຽນມີອຸປະກອນ ຢ່າງຄົບຖ້ວນ, ແຕ່ລະຫ້ອງຮຽນມີລະບົບລົມເພື່ອສະດວກສະບາຍໃຫ້ການໄປມາ.ບັນດາຂະແໜງເຕັກນິກ ເຕັກໂນໂລຊີ ແລະ ການຢາ ,ການແພດມີຫ້ອງທົດລອງຢ່າງຄົບຖ້ວນ ແລະ ທັນສະໄໝ.

* ໂຮງຮຽນໄດ້ລັດຖະບານມອບຫຼຽນໄຊແຮງງານຊັ້ນ 3 ເນື່ອງໃນໂອກາດວັນສ້າງຕັ້ງຄົບຮອບ 10 ປີ
ຫຼຽນໄຊແຮງງານຊັ້ນ 2 ເນື່ອງໃນໂອກາດວັນສ້າງຕັ້ງຄົບຮອບ 15 ປີ ແລະ ຫຼຽນໄຊ ແຮງງານ ຊັ້ນໜຶ່ງ
ເນື່ອງໃນໂອກາດວັນສ້າງຕັ້ງຄົບຮອບ 20 ປີ

ມະຫາວິທະຍາໄລທຸລະກິດແລະເຕັກໂນໂລຊີຮ່າໂນ້ຍເປັນໂຮງຮຽນໜຶ່ງທີ່ສຶກສາອົບຮົມກໍ່ສ້າງຫຼາຍ ຂະແໜງວິຊາການຮຽນແລະປູຫຼາຍລະດັບຊັ້ນຮຽນ (ຊັ້ນຕີ,ຊັ້ນໂທ,ຊັ້ນເອກ.) ລະອຽດດັ່ງລຸ່ມນີ້:

**I. ລະດັບຊັ້ນປະລິນຍາຕີ ມີ 26 ຂະແໜງຮຽນ ທີ່ຮັບສະໝັກນັກສຶກສາ ຄື:**



| ລ/ດ | ຂະແໜງວິຊາຮຽນ | 14 | ສະຖາປັດຕະຍາກຳ |
|---|---|---|---|
| 1 | ການແພດ (ແພດທົ່ວໄປ) | 15 | ເຕັກນິກລົດຍົນ |
| 2 | ການຢາ | 16 | ຕົບແຕ່ງພາຍໃນ |
| 3 | ທັນຕະແພດ (ແຂ້ວ - ຄາງກະໄຕ - ໜ້າ) | 17 | ເຕັກນິກໄຟຟ້າເອເລັກໂຕນິກ |
| 4 | ພະຍາບານ | 18 | ເຕັກນິກການກໍ່ສ້າງ |
| 5 | ບໍລິຫານທຸລະກິດ | 19 | ຄຸ້ມຄອງຊັບພະຍາກອນ ແລະ ສິ່ງແວດລ້ອມ |
| 6 | ທຸລະກິດການຄ້າ | 20 | ເຕັກນິກສິ່ງແວດລ້ອມ |
| 7 | ຄຸ້ມຄອງເສດຖະກິດ | 21 | ອອກແບບສິນລະປະກຳ |
| 8 | ທ່ອງທ່ຽວ | 22 | ເຕັກນິກເມການິກ ເອເລັກຕຣິງ |
| 9 | ການເງິນ - ການທະນາຄານ | 23 | ສິນລະປະກຳພູມໄລ້ |
| 10 | ບັນຊີ | 24 | ພາສາຣັດເຊຍ ແລະ [illegible] |
| 11 | ກົດໝາຍເສດຖະກິດ | 25 | ພາສາອັງກິດ |
| 12 | ຄຸ້ມຄອງແຫ່ງລັດ | 26 | ພາສາຈີນ ແລະ ຍີ່ປຸ່ນ |
| 13 | ເຕັກໂນໂລຊີຂໍ້ມູນຂ່າວສານ (ໄອທີ) IT | 27 | ພາສາຫວຽດນາມສຳລັບຄົນຕ່າງປະເທດ |

**II. ລະດັບຊັ້ນປະລິນຍາໂທ ມີ 5 ຂະແໜງຮຽນ ທີ່ຮັບສະໝັກນັກສຶກສາ ຄື:**

1,ໄອທີ () 2. ການເງິນ, 3.ການທະນາຄານ 4. ຄຸ້ມຄອງເສດຖະກິດ 5. ບໍລິຫານທຸລະກິດ

**III. ລະບົບເຊື່ອມຕໍ່ຊັ້ນປະລິນຍາຕີ ມີ 9 ຂະແໜງຮຽນທີ່ຮັບນັກສຶກສາເຊັ່ນ:**

1. ການຢາ, 2. ບັນຊີ, 3, ການເງິນ 4.ການທະນາຄານ, 5.ບໍລິຫານທຸລະກິດ, 6.ຄຸ້ມຄອງແຫຼ່ງລັດ, 7.ໄອທີ, 8.ກົດໝາຍເສດທະກິດ 9. ການທ່ອງທ່ຽວ

ຄ່າຮຽນ:ສໍາລັບຜູ້ຮຽນປະລິນຍາຕີດ້ານເສດຖະກິດລວມມີ(ການເງິນ,ທະນາຄານ,ບັນຊີ,ການຄ້າ,ການທ່ອງທ່ຽວ, ບໍຫານທຸລະກິດ, ກົດໝາຍເສດຖະກິດ,ພາສາຕ່າງປະເທດ, ຄຸ້ມຄອງແຫ່ງລັດ) ແມ່ນ :12.000.000 ດົ່ງ/ປີຮຽນ

12.500 000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາຫຼັບຜູ້ຮຽນປີກຽມພາສາຫວຽດນາມ

15.400 000 ດົ່ງຫວຽດນາມຕໍ່ໜຶ່ງປີຮຽນສໍາຫຼັບຜູ້ຮຽນສາຍໄອທີ

16.000.000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນປະລິນຍາຕີຂະແໜງເຕັກນິກ

20.000.000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາໂທ.

30.000.000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາເອກ

25.000.000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາຕີການຢາ

25.000.000ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາຕີສໍາລັບພະແນກພະຍາບານ.

60.000.000 ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາຕີແພດທົ່ວໄປ

72.000.000ດົ່ງຫວຽດນາມ/ຕໍ່ໜຶ່ງປີຮຽນສໍາລັບຜູ້ຮຽນຊັ້ນປະລິນຍາຕີທັນຕະແພດ(ແຂ້ວ-ຄາງກະໄຕ-ໜ້າ)

2. ເປົ້າໝາຍຮັບສະໝັກ:

- ຊັ້ນປະລິນຍາຕີ: ຮັບນັກຮຽນຈົບມັດທະຍົມຕອນປາຍແລະຮັບນັກສຶກສາຈົບຊັ້ນສູງ (ວິທະຍາໄລ) ທີ່ໄດ້ຮຽນລະບົບເຊື່ອມຕໍ່ປະລິນຍາຕີ.
- ຊັ້ນປະລິນຍາໂທ: ຮັບນັກສຶກສາ, ພະນັກງານລັດຖະກອນ ທີ່ມີລະດັບຈົບຊັ້ນປະລິນຍາຕີ.
- ຊັ້ນປະລິນຍາເອກ; ຮັບນັກສຶກສາ, ພະນັກງານລັດຖະກອນ ທີ່ມີລະດັບຈົບຊັ້ນປະລິນຍາໂທ









3. ຮູບແບບການກໍ່ສ້າງ:

* ຊັ້ນກຽມພາສາຫວຽດນາມ (ໃຊ້ເວລາ 6 ເດືອນ ຫາ 1 ປີ, ອີງຕາມລະດັບພາສາຫວຽດຂອງນັກສຶກສາທີ່ມີແລ້ວ).
* ຊັ້ນປະລິນຍາຕີ: ຮຽນເວລາ 4 ປີ. ສະເພາະຂະແໜງກ່ຽວກັບການແພດແມ່ນ 6 ປີ ແລະ ການປາ 5 ປີ
* ຊັ້ນປະລິນຍາໂທ: ຮຽນເວລາ 2 ປີ.

4.ປະກອບເອກະສານ:

ປະກອບເອກະສານເປັນສອງຊຸດເປັນພາສາຫວຽດນາມທີ່ມີການເຊັນຮອງຮັບຂອງອົງການຈັດຕັ້ງທີ່ມີສິດຕຳແໜ່ງ ລະອຽດຄື:

+ໃບສະໝັກຂໍເຂົ້າຮຽນ.

+ໃບຢັ້ງຢືນທີ່ຢູ່ ທີ່ສປປລາວ.

+ໃບຢັ້ງຢືນສຸຂະພາບ.

+ໃບປະກາດ ແລະ ໃບຄະແນນຈົບມ7 (ສຳລັບຜູ້ຮຽນຊັ້ນປະລິນຍາຕີ) ໃບປະກາດຈົບຊັ້ນປະລິນຍາຕີ ແລະໃບຄະແນນ (ສຳລັບຜູ້ຮຽນຊັ້ນປະລິນຍາໂທ).

+ໃບຢັ້ງຢືນພາສາຫວຽດນາມ ແລະ ພາສາອັງກິດ(ຖ້າມີ).

+ຂໍ້ຕົກລົງຂອງກະຊວງສຶກສາທິການ ແລະ ກິລາ ສປປລາວ (ສາມາດປະກອບຕາມຫລັງ)





ນະໂຍບາຍຕ່າງໆຂອງມະຫາວິທະຍາໄລທຸລະກິດ ແລະ ເຕັກໂນໂລຊີຮ່າໂນ້ຍ ເພື່ອສ້າງຄວາມສະດວກໃຫ້ນັກສຶກສາລາວ

1. ທຶນການສຶກສາສຳລັບນັກສຶກສາທີ່ມີຜົນການຮຽນດີ
2. ໄດ້ຍົກເວັ້ນຄ່າຫໍພັກປີກຽມພາສາຫວຽດນາມ.
3. ຄ່າຮຽນຄືກັນກັບນັກສຶກສາຫວຽດນາມ.
4. ບໍ່ເສຍຄ່າເຮັດວີຊາ ແລະຕໍ່ວີຊາປັກສປອດ
5. ນັກສຶກສາໄດ້ສຶກສາຮ່ຳຮຽນ ແລະ ທ່ອງທ່ຽວໃນສະພາບແວດລ້ອມທີ່ທັນສະໄໝ.
6. ໄດ້ຍົກເວັ້ນຄ່າຮຽນເພີ່ມພາສາຫວຽດລະດັບສູງ
7. ຫໍພັກມີອິນເຕີເນັດຮັບໃຊ້ຟຣີ.

